

# ປົກປ້ອງຕົວທ່ານເອງຈາກ ໄຂ້ຫວັດນົກເມື່ອເຮັດວຽກກັບ ສັດປີກທີ່ຕິດເຊື້ອ

## ໄຂ້ຫວັດນົກສາມາດຕິດຕໍ່ຈາກສັດປີກສູ່ຄົນໄດ້ ແລະ ເຮັດໃຫ້ທ່ານເຈັບປ່ວຍໄດ້.

- ໄວຣັດອາດຈະຢູ່ໃນຂີ້, ຂອງແຫຼວ ຫຼື ຂົນຂອງສັດປີກທີ່ປ່ວຍໄດ້.
- ມັນສາມາດຕິດຕໍ່ໄດ້ຜ່ານຂອງແຫຼວກະເດັນ, ຝຸ່ນ ຫຼື ລະອອງນ້ຳໃນອາກາດ. ສິ່ງເຫຼົ່ານີ້ສາມາດເຂົ້າໄປໃນຕາ, ດັງ ແລະ ປອດຂອງທ່ານໄດ້.
- ມັນຍັງສາມາດຕິດຕໍ່ໄດ້ ຫາກທ່ານສຳຜັດກັບພື້ນຜິວທີ່ຕິດເຊື້ອ ແລະ ຈາກນັ້ນສຳຜັດກັບໃບໜ້າຂອງທ່ານ.

## ປ້ອງກັນຕາ, ດັງ ແລະ ປາກຂອງທ່ານ.

ສວມໃສ່ອຸປະກອນປ້ອງກັນສ່ວນບຸກຄົນ (Personal Protective Equipment, PPE) ສະເໝີ ເມື່ອເຮັດວຽກກັບສັດປີກທີ່ອາດຈະປ່ວຍ.



ສວມໃສ່ແວ່ນປ້ອງກັນ (ທີ່ມີຊ່ອງລະບາຍອາກາດທາງອ້ອມ).





ສວມໃສ່ໜ້າກາກ N95 ຫຼື ເຄື່ອງຊ່ວຍຫາຍໃຈທີ່ມີປະສິດທິພາບຫຼາຍກວ່າ.



ສວມໃສ່ຖົງມື ແລະ ຫ້າມສຳຜັດໃບໜ້າຂອງທ່ານ.



ລ້າງ ຫຼື ອະນາໄມມືເລື້ອຍໆໃນຂະນະທີ່ກຳລັງເຮັດວຽກ.

ນອກຈາກນີ້, ສວມຊຸດປົກຄຸມ, ເກີບໂບກ ແລະ ຜ້າຄຸມຫົວ ແລະ ຜົມ.



## ຈຳເປັນຕ້ອງມີອຸປະກອນ PPE ເພີ່ມເຕີມສຳລັບໜ້າວຽກທີ່ມີຄວາມສ່ຽງສູງ.

ວຽກບາງປະເພດອາດຈະເຮັດໃຫ້ທ່ານສຳຜັດກັບໄວຣັດ ຫຼື ສານເຄມີທີ່ເປັນອັນຕະລາຍໄດ້ຫຼາຍຂຶ້ນ, ສະນັ້ນ ຈຳເປັນຕ້ອງມີການປ້ອງກັນຫຼາຍຂຶ້ນ. ວຽກເຫຼົ່ານີ້ມີຄື:

- ການລົດຈຳນວນຝູງສັດ;
- ການເຄື່ອນຍ້າຍ ຫຼື ການຝັງສົບສັດປີກທີ່ຕາຍແລ້ວ;
- ການອະນາໄມ ແລະ ການຂ້າເຊື້ອໂຮງເຮືອນ;
- ຫຼື ວຽກອື່ນໆໃນຮົ່ມ ຫຼື ພື້ນທີ່ປິດລ້ອມ ທີ່ອາດມີໄວຣັດສະສົມໄດ້.

ໃນສະຖານະການເຫຼົ່ານີ້, ໜ້າກາກ N95 ຍັງບໍ່ພຽງພໍທີ່ຈະປ້ອງກັນປອດຂອງທ່ານ. ນອກຈາກນັ້ນ, ຈົ່ງຢ່າລືມດູແລຕາຂອງທ່ານໃຫ້ປອດໄພອີກດ້ວຍ. ສວມໃສ່ຢ່າງໃດຢ່າງໜຶ່ງ:



ໜ້າກາກປ້ອງກັນຝຸ່ນແບບເຄິ່ງໜ້າ (ຊະນິດຢາງ) ທີ່ມີຕົວກອງ P-100 ແລະ ແວ່ນຕາທີ່ມີປ່ອງລະບາຍອາກາດທາງອ້ອມ.



ໜ້າກາກປ້ອງກັນຝຸ່ນແບບເຕັມໜ້າ (ຊະນິດຢາງ) ທີ່ມີຕົວກອງ P-100



ໜ້າກາກຊ່ວຍຫາຍໃຈຟອກອາກາດແບບໃຊ້ ພະລັງງານ (PAPR) ທີ່ມີຕົວກອງອາກາດອະນຸພາກປະສິດທິພາບສູງ (HEPA)

- ຫາກວຽກເຫຼົ່ານີ້ກ່ຽວຂ້ອງກັບສານເຄມີ, ໃຫ້ເລືອກກ່ອງທີ່ຖືກຕ້ອງ.
- ຄວນສວມໃສ່ຊຸດປົກຄຸມທີ່ປ້ອງກັນຂອງແຫຼວ ເມື່ອອະນາໄມ ແລະ ຂ້າເຊື້ອໂຮງເຮືອນ.
- ນາຍຈ້າງຂອງທ່ານຄວນຈັດຫາອຸປະກອນ PPE ທັງໝົດໃຫ້ໂດຍບໍ່ຄິດຄ່າໃຊ້ຈ່າຍ.
- ຫຼັງຈາກກະເຮັດວຽກຂອງທ່ານ, ໃຫ້ຖອດອຸປະກອນ PPE ທັງໝົດອອກ ແລະ ອາບນ້ຳ.

## ເຝົ້າລະວັງອາການໄຂ້ຫວັດນົກຂອງຕົວທ່ານເອງ.

ຫາກທ່ານມີອາການທີ່ຄ້າຍໆໄຂ້ຫວັດ ລວມທັງຕາແດງ ຫຼື ນ້ຳມູກໄຫຼ, ໃຫ້ຕິດຕໍ່ຫາພະແນກສຸຂະພາບໃນທ້ອງຖິ່ນຂອງທ່ານ. ນາຍຈ້າງຕ້ອງຈັດ ໃຫ້ມີຜົນປະໂຫຍດຄ່າຊົດເຊີຍໃຫ້ພະນັກງານ ສຳລັບພະນັກງານທີ່ຕິດເຊື້ອໄຂ້ຫວັດນົກໃນລະຫວ່າງເຮັດວຽກ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ຄ່າຊົດເຊີຍໃຫ້ພະນັກງານ ແລະ ການລາພັກເຈັບປ່ວຍທີ່ໄດ້ຮັບເງິນ, ໃຫ້ໂທຫາ 1-800-736-7401.

### ສຳລັບຂໍ້ມູນເພີ່ມເຕີມ:

ໜ້າເວັບໄຊທ໌ CDPH Bird Flu: **go.cdph.ca.gov/birdflu**

ສາຍດ່ວນໃຫ້ຄວາມຊ່ວຍເຫຼືອກ່ຽວກັບອັນຕະລາຍໃນບ່ອນເຮັດວຽກຂອງລະບົບການປະເມີນອັນຕະລາຍ ແລະ ການບໍລິການຂໍ້ມູນ: (866) 282-5516

ສາຍດ່ວນດ້ານສຸຂະພາບຂອງສູນແຫ່ງຊາດເພື່ອສຸຂະພາບພະນັກງານຟາມ Call for Health: +1 (800) 377-9968 ຫຼື ຜ່ານທາງ WhatsApp ໄດ້ທີ່ + 1 (737) 999-4162

ພຶດສະພາ 2025 © 2025, ກົມສາທາລະນະສຸກຂອງລັດແຄລິຟໍເນຍ